

# SuPER WE Coffee

## ວຽກເດັ່ນຂອງ ໂຄງການປີ 2024

**ກໍລະກົດ:** ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງໃນການເປັນຜູ້ນຳ ແລະ ຜູ້ປະກອບການ ແລະ ຈັດກອງປະຊຸມຜູ້ຜະລິດກາເຟ.

**ສິງຫາ:** ການຝຶກອົບຮົມການໃຊ້ເຄື່ອງມືໃນການຕິດຕາມຂະບວນການຜະລິດກາເຟ ແລະ ສະໜອງເຮືອນຮົ່ມສຳລັບການຕາກກາເຟ.

**ກັນຍາ:** ການສົ່ງເສີມການຂາຍເພື່ອໃຫ້ຜູ້ປະກອບການດ້ານກາເຟຮູ້ຈັກກາເຟພູດອຍດາກຈຶງຫລາຍຂຶ້ນ.

## ຜູ້ທີ່ໄດ້ຮັບຜົນປະໂຫຍດ

ທາງກົງ

**400 ຊາວສວນກາເຟ**

**280 ແມ່ຍິງຊົນເຜົ່າ**

ທາງອ້ອມ

**4,463 ປະຊາຊົນ**

**2,217 ແມ່ຍິງຊົນເຜົ່າ**

## ປະຫວັດຄວາມເປັນມາ

ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບ ຕ່ອງໂສ້ ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນແຂວງ ເຊກອງ ຈະໄດ້ສ້າງຄວາມອາດສາມາດ ໃຫ້ຊາວສ່ວນກາເຟສາມາດຍົກສະມັດຕະພາບ ການຜະລິດກາເຟໃຫ້ໄດ້ຜົນຜະລິດສູງ ແລະ ມີຄຸນະພາບ ແລະ ເພີ່ມລາຍຮັບໃນຄອບຄົວໃຫ້ສູງຂຶ້ນ ໂດຍຜ່ານການສະໜັບສະໜູນສ້າງຕັ້ງສູນແປຮູບກາເຟ, ສະໜອງເຕັກນິກການປູກ ແລະ ການແປຮູບໃຫ້ແກ່ກຸ່ມຜະລິດ, ສະໜອງອຸປະກອນທີ່ຈຳເປັນໃນການປູກ ແລະ ແປຮູບກາເຟ. ຈຸດປະສົງຂອງໂຄງການແມ່ນເພື່ອ ສະໜັບສະໜູນການພັດທະນາເສດຖະກິດ ທີ່ເປັນມິດກັບສິ່ງແວດລ້ອມ, ເພີ່ມທະວີການຮ່ວມມືກັບໜ່ວຍງານສະຫະກອນ ເຊັ່ນດຽວກັນກັບການສ້າງຄວາມ ສາມາດໃຫ້ແກ່ແມ່ຍິງຜູ້ຜະລິດກາເຟໂດຍເຊື່ອມໂຍງການຮ່ວມມືວຽກງານບົດບາດທາງເພດ, ການເປັນຜູ້ນຳ ແລະ ຜູ້ປະກອບການ.

## ທີ່ຕັ້ງໂຄງການ




switchasia GRANTS PROGRAMME · Halieus · 4FORM · International Cooperative Alliance Asia and Pacific · ITC ILO International Training Centre · FAIRTRADE ITALIA





ກໍລະກົດ

## ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງໃນການເປັນຜູ້ນໍາ ແລະ ຜູ້ປະກອບການ

ສໍາເລັດເປີດຝຶກອົບຮົມກ່ຽວກັບທັກສະການເປັນຜູ້ນໍາ ແລະ ຜູ້ປະກອບການໃຫ້ແກ່ຊາວສວນກາເຟແມ່ຍິງໃນລະຫວ່າງວັນທີ 2-11 ກໍລະກົດ 2024 ຢູ່ທີ່ ເມືອງດາກຈຶງ ແຂວງ ເຊກອງ. ມີຜູ້ເຂົ້າຮ່ວມ 48 ທ່ານ ເຊິ່ງເປັນຊາວສວນກາເຟ ຍິງ 38 ທ່ານ. ຫົວຂໍ້ການຝຶກອົບຮົມປະກອບດ້ວຍ ບົດບາດຍິງ-ຊາຍ, ການວິເຄາະບົດບາດທາງເພດໂດຍການນໍາໃຊ້ເຄື່ອງມືຕົ້ນໄມ້ບັນຫາ, ການສ້າງແຜນທຸລະກິດ, ພື້ນຖານການຕະຫຼາດ, ບັນຊີ, ການປ່ຽນຜ່ານເສດຖະກິດສີຂຽວ ແລະ ການຮັບຟັງຄໍາບັນຍາຍໃນຫົວຂໍ້ແມ່ຍິງກັບການຜະລິດກາເຟຄຸນະພາບ, ການເຮັດທຸລະກິດກາເຟເຊິ່ງໄດ້ນັກບັນຍາຍຈາກຕົວແທນຂອງສະມາຄົມກາເຟລາວ.







ກໍລະກົດ

## ການປູກຕົ້ນໄມ້ໃຫ້ຮົ່ມໃນສວນກາເຟ

ກອງປະຊຸມກຸ່ມຜູ້ຜະລິດການເຟຄັ້ງວັນທີ 15 ກໍລະກົດ 2024 ຊາວສວນປູກກາເຟທຸກທ່ານແມ່ນມີຄວາມສົນໃຈປູກໄມ້ໃຫ້ໝາກແຊມຕົ້ນກາເຟເຊັ່ນ: ໝາກມ່ວງ, ໝາກກ້ຽງ, ໝາກມີ້, ໝາກອາວາຄາໂດ ແລະ ໄມ້ດູ່.



switchasia GRANTS PROGRAMME | Haliéus COOPERATIVES FOR DEVELOPMENT | 4FORM Ente di Formazione Nazionale | coop International Cooperative Alliance Asia and Pacific | ITC ILO International Training Centre | FAIRTRADE ITALIA





## ສິງຫາ

### ສະໜອງເຮືອນຮົ່ມສຳລັບການຕາກກາເຟ



ສຳເລັດຈັດຊື້ ແລະ ສົ່ງມອບອຸປະກອນເຮືອນຮົ່ມສຳລັບຕາກກາເຟແບບຖາວອນຈຳນວນ 8 ຫຼັງໃຫ່ແກ່ 7 ບ້ານໃນ 15 ບ້ານເປົ້າໝາຍພາຍໃນເດືອນສິງຫາ 2024. ມາຮອດປະຈຸບັນໂຄງການໄດ້ສະໜັບສະໜູນເຮືອນຕາກກາເຟໄປແລ້ວຈຳນວນທັງໝົດ 19 ຫຼັງ



## ກັນຍາ

### ການຝຶກອົບຮົມການໃຊ້ເຄື່ອງມືໃນການຕິດຕາມຂະບວນການຜະລິດກາເຟ



ວັນທີ 26-29 ກັນຍາ 2024 ໂຄງການໄດ້ຈັດຝຶກອົບຮົມການໃຊ້ເຄື່ອງມືການຕິດຕາມ ແລະ ລາຍງານກິດຈະກຳໂຮງຮຽນຊາວກະສິກອນໃຫ້ແກ່ທີມງານໂຄງການ, ຄູ່ຮ່ວມງານລັດຂັ້ນເມືອງ ແລະ ຜູ້ອຳນວຍຄວາມສະດວກຂັ້ນບ້ານ ໂດຍຊ່ຽວຊານທີ່ປຶກສາໂຮງຮຽນຊາວກະສິກອນ. ມີຜູ້ເຂົ້າຮ່ວມ 13 ທ່ານ ຍິງ 5 ທ່ານ ຊຶ່ງ 5 ທ່ານແມ່ນຜູ້ອຳນວຍຄວາມສະດວກຂັ້ນບ້ານ. ການຝຶກອົບຮົມປະກອບດ້ວຍພາກທິດສະດີ ແລະ ລົງສາທິດປະຕິບັດຕົວຈິງຢູ່ຂັ້ນບ້ານ. ນັກສຳມະນາກອນໄດ້ຮຽນຮູ້ວິທີການ ແລະ ເຄື່ອງມືການຕິດຕາມ, ລາຍງານ, ວິເຄາະຈຸດດີ, ສິ່ງທ້າທາຍ ແລະ ການວາງແຜນ

switchasia GRANTS PROGRAMME · Halieus COOPERATIVES FOR DEVELOPMENT · 4FORM · coop International Cooperative Alliance Asia and Pacific · ITC ILO International Training Centre · FAIRTRADE ITALIA






# ການສົ່ງເສີມການຂາຍເພື່ອໃຫ້ຜູ້ປະກອບການດ້ານກາເຟຮູ້ຈັກກາເຟພູດອຍດາກຈຶງຫລາຍຂຶ້ນ

ສະມາຊິກກຸ່ມຜູ້ຜະລິດກາເຟພູດອຍດັກຈຶງໄດ້ເຂົ້າຮ່ວມງານວັນກາເຟສາກົນທີ່ຈັດຂຶ້ນໃນວັນທີ 27-29 ກັນຍາທີ່ສູນການຄ້າວຽງຈັນເຊັນເຕີ, ນະຄອນຫລວງວຽງຈັນ ຈຸດປະສົງເພື່ອໃຫ້ຜູ້ປະກອບການດ້ານກາເຟ, ຜູ້ຊື້ກາເຟ ແລະ ສາທາລະນະຊົນໄດ້ຮູ້ຈັກກາເຟພູດອຍດາກຈຶງ ແລະ ເປັນການເປີດໂອກາດດ້ານການຕະຫຼາດໃຫ້ກວ້າງຂວາງຂຶ້ນ










switchasia GRANTS PROGRAMME · Haliéus COOPERATIVES FOR DEVELOPMENT · 4FORM · International Cooperative Alliance Asia and Pacific · ITC International Training Centre · FAIRTRADE ITALIA



# ສຽງຂອງການປ່ຽນແປງ

## ການສ້າງຄວາມເຂັ້ມແຂງ ທາງດ້ານເສດຖະກິດໃຫ້ແກ່ແມ່ຍິງ

ບັນທຶກ ແລະ ແປໂດຍ: ທ່ານ ກຸ້ງມິ່ງ ຈັ້ງລີໄຊ

"ຂ້ອຍ ແລະ ຄອບຄົວຂອງຂ້ອຍ ແມ່ນຍັງປາກຮຽນຮູ້ຫຼາຍຢ່າງ ຈາກໂຄງການຕົ່ມ ໂດຍສະເພາະແມ່ນ ເຕັກນິກການປູກກາເຟ, ເຕັກນິກການບົວລະບັດສວນກາເຟ ແລະ ການຮັດຝຸ່ນບົ່ມ ເພາະສິ່ງເຫຼົ່ານີ້ ຈະຊ່ວຍເພີ່ມຜົນຜະລິດຂອງກາເຟໄດ້ຫຼາຍຂຶ້ນ ລວມ ໄປເຖິງມີຄຸນະພາບສູງຂຶ້ນກວ່າເກົ່າ."

**ທ່ານ ນາງ ທອມສະໜອນ ໄຊຍະຄານ**
**ສະມາຊິກ ກຸ່ມຜະລິດກາເຟ**
**ບ້ານ ດາກເອີຍ, ເມືອງ ດາກຈຶງ, ແຂວງ ເຊກອງ**



ທອມສະໜອນ ກຳລັງກວດເບິ່ງກາເຟ



ອຶກ ມີຄວາມສຸກຫຼາຍທີ່ໄດ້ເຮັດວຽກຮ່ວມກັບເມຍຂອງ

"ແຕ່ກ່ອນຂ້ອຍ ບໍ່ຮູ້ວ່າຈະຕ້ອງຂາຍກາເຟແນວໃດ ໃຫ້ພໍ່ຄ້າຊື້ກາເຟ ຂ້ອຍກໍຂາຍໄປໃນລາຄາທີ່ຖືກ. ຫຼັງຈາກທີ່ຂ້ອຍໄດ້ເຂົ້າຮ່ວມ ກິດຈະກຳຂອງໂຄງການ ເຮັດໃຫ້ຂ້ອຍໄດ້ຮູ້ກ່ຽວກັບເຕັກນິກ ການກ້າເບ້ຍກາເຟ, ການປູກກາເຟ ແລະ ການແປຮູບກາເຟ. ນອກຈາກນັ້ນ, ຂ້ອຍກໍຍັງໄດ້ຮຽນຮູ້ກ່ຽວກັບບັນຊີຄົວເຮືອນ ເຊິ່ງມັນໄດ້ຊ່ວຍໃຫ້ຂ້ອຍໄດ້ຕັດສິນໃຈໃນການຂາຍກາເຟຮ່ວມ ກັບເມຍຫຼາຍຂຶ້ນ."

**ທ່ານ ອຶກ**
**ສະມາຊິກ ກຸ່ມຜະລິດກາເຟ**
**ບ້ານ ດາກເດີນ, ເມືອງ ດາກຈຶງ, ແຂວງ ເຊກອງ**

# ຕິດຕໍ່ພວກເຮົາໄດ້ທີ່:


**ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ**
ຫົວໜ້າອົງການ
ເບີໂທ: (+856) 20 5564 2235
ອີເມລ: keoamphone.souvannaphoum@care.org

**ທ່ານ ຄຳປະເສີດ ເຈືດຈິງທາວ**
ຫົວໜ້າ ຫ້ອງການແຂວງ ເຊກອງເບີໂທ:
(+856) 20 7741 8956
ອີເມລ: khampaseuth.cheutchingthao@care.org

**ທ່ານ ນາງ ນາລາດາ ພົມວິໄຊ**
ທີ່ປຶກສາ ດ້ານການສື່ສານ ແລະ ການພົວພັນແບບມີສ່ວນຮ່ວມເບີໂທ:
(+856) 20 5600 5600
ອີເມລ: nalada.phomvixay@care.org

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວຕູ້ ປ.ນ
4328, ຖະໜົນໜອງສ້າງທໍ່,
ບ້ານ ໜອງສ້າງທໍ່, ເມືອງ ໄຊເສດຖາ,
ນະຄອນຫຼວງວຽງຈັນ, ສປປ ລາວ ເບີໂທ
(+856-21) 217 727

ຫ້ອງການ ເຊກອງ
ເມືອງ ດາກຈຶງ, ແຂວງ ເຊກອງ, ສປປ ລາວເບີໂທ
(+856-38) 215 010

Lao.Info@care.org  www.careint.org.la  @careinlaos  CARE International in Lao PDR


care®